ຂັ້ນຕອນການລ້ຽງທອມງົວ

20

1 ການສ້າງຄອກ

- ຄອກສຳລັບການທອມງົວແມ່ນຄວນສ້າງຢູ່ບ່ອນທີ່ສູງ ຫລື ໂນນ, ລະບາຍນ້ຳໄດ້ສະດວກ, ສາມາດກັນແດດ, ຝົນ ແລະ ລົມແຮງ.
- ການສ້າງຄອກງົວໃສ່ບ່ອນໂນນ ກໍ່ເປັນວິທີຫລຸດຜ່ອນແຮງງານ ເພາະວ່າເມື່ອເວລາຝົນຕົກ ນ້ຳຝົນຈະເຊາະເອົາຝຸ່ນຂີ້ງົວ ແລະ ສິ່ງເສດເຫລືອຕ່າງໆໄຫລລົງໄປໃສ່ທີ່ງຫຍ້າ.
- ຄວນສ້າງດ້ວຍໄມ້ ຫລື ວັດຖຸທີ່ຫາໄດ້ສະດວກ ແລະ ທົນທານໃນທ້ອງຖິ່ນມາສ້າງຄອກ.
- ພື້ນຄອກຕ້ອງແໜ້ນດີ ແລະ ຖ້າມີເງື່ອນໄຂຄວນປູດ້ວຍຊີມັງ (ຕ້ອງຂັດຫຍາບເພື່ອບໍ່ໃຫ້ສັດມື່ນ) ເພື່ອປ້ອງກັນບໍ່ໃຫ້ມັນເປັນຕົມ, ສະດວກໃນການອະນາໄມ ແລະ ໃຊ້ໄດ້ດົນນານ.
- ຄວນເຮັດໃຫ້ພື້ນຄອກຄ້ອຍໄປທາງດ້ານຫລັງ. ພື້ນຄອກຕ້ອງໃຫ້ແຫ້ງ ແລະ ສະອາດຢູ່ສະເໝີເພື່ອປ້ອງກັນການເກີດເຊື້ອພະຍາດ.
- ຄອກງົວຄວນຢູ່ໃກ້ທີ່ງຫຍ້າ ເພື່ອສະດວກໃນການເອົາຫຍ້າມາໃຫ້ສັດກິນ ແລະ ສະດວກໃນເວລາເອົາຝຸ່ນຂີ້ງົວໄປໃສ່ທີ່ງຫຍ້າ.
- ຂະໜາດຂອງຄອກສຳລັບການທອມງົວ ແມ່ນຄວນໃຫ້ເໝາະສົມກັບຈຳນວນງົວ ຊຶ່ງໂດຍທົ່ວໄປແລ້ວ ແມ່ນປະມານ 6 ຕາແມັດຕໍ່ໂຕ.
- ຮາງອາຫານຄວນຢູ່ນອກຄອກ, ສູງປະມານ 60 ຊັງຕີແມັດ, ກວ້າງ 80 ຫາ 90 ຊັງຕີແມັດ.
- ຮາງນ້ຳ ຫລື ຖັງໃສ່ນ້ຳໃຫ້ງົວກິນຕ້ອງຕັ້ງຢູ່ຂ້າງນອກຂອງຄອກ ເພື່ອສະດວກໃນການໃຫ້ອາຫານ, ການອະນາໄມ ແລະ ຄວນມີນ້ຳສະອາດໃຫ້ງົວກິນຕະຫລອດເວລາ.

ຄອກທອມງົວຕ້ອງຢູ່ບ່ອນສູງ ແລະ ນຳໃຊ້ວັດສະດຸທີ່ມີໃນທ້ອງຖິ່ນໃນການສ້າງຄອກ

ຊຸດຊຸມທາງດ້ານຫລັງຂອງຄອກທອມເພື່ອເປັນບ່ອນເກັບມ້ຽນຂີ້ງົວ

2 ການກະກຽມພື້ນທີ່ ແລະ ດິນສຳລັບປູກພືດອາຫານສັດ

- ການກຽມພື້ນທີ່ຕ້ອງໄຖພວນດິນ 2-3 ຄັ້ງ. ການໄຖຄັ້ງທີໜຶ່ງແມ່ນເປັນການໄຖເພື່ອບຸກເບີກ,ຕາກແດດ ແລະ ກຳຈັດວັດສະພືດ ແລະ ໄຖພວນຄັ້ງທີສອງ ແມ່ນເພື່ອທຳລາຍຕົ້ນອ່ອນຂອງວັດສະພືດທີ່ຂຶ້ນໃໝ່ ພ້ອມທັງເປັນການພວນດິນໃຫ້ລະອຽດ ແລະ ຮາບພຽງດີ.
- ຕ້ອງເປັນບ່ອນທີ່ນ້ຳບໍ່ຂັງ ແລະ ລະບາຍນ້ຳໄດ້ສະດວກເພື່ອໃຫ້ພືດມີການຈະເລີນເຕີບໂຕທີ່ດີ ແລະ ໃຫ້ຜົນຜະລິດສູງ.
- ບໍລິເວນດັ່ງກ່າວນີ້ບໍ່ຄວນໃຫ້ມີຮົ່ມຫລາຍເກີນໄປເພາະພືດຕ້ອງການແສງແດດເພື່ອການຂະຫຍາຍໂຕ.
- ການກະກຽມດິນທີ່ດີແມ່ນເປັນຈຸດເລີ້ມຕົ້ນຂອງການຫລຸດຜ່ອນແຮງງານໃນການເສຍຫຍ້າ ແລະ ພືດອາຫານສັດຈະຈະເລີນເຕີບໂຕໄດ້ດີ.
- ເພື່ອຮັບປະກັນໃຫ້ມີອາຫານພຽງພໍສຳລັບການທອມງົວເຖິກໜຶ່ງໂຕ ທີ່ມີນ້ຳໜັກປະມານ 200 ກິໂລກຼາມ ເຮົາຕ້ອງປູກຫຍ້າກີນີ, ຫຍ້າເນເປຍ ຫລື ຫຍ້າມູລາໂຕປະມານ 800-1.200 ຕາແມັດ ແລະ ປູກຖົ່ວສະໄຕໂລຕື່ມປະມານ 300-400 ຕາແມັດ.

3 ແນວພັນພືດອາຫານສັດ

- ແນວພັນພືດອາຫານສັດແມ່ນມີຫລາຍຊະນິດຊຶ່ງຊາວກະສິກອນສາມາດເລືອກໄດ້ຕາມຄວາມເໝາະສົມ. ສິ່ງສຳ ຄັນແມ່ນຄວນໃຫ້ມີທັງຫຍ້າ ແລະ ຖົ່ວຊຶ່ງສາຍພັນທີ່ແນະ ນຳສຳລັບການທອມງົວໄດ້ແກ່:
    - ຫຍ້າຫຍ້າເນເປຍ
    - ຫຍ້າກີນີສີມ່ວງ
    - ຫຍ້າມຸລາໂຕ
    - ຖົ່ວສະໄຕໂລ 184
- ຫຍ້າ ແລະ ຖົ່ວທີ່ກ່າວມານີ້ແມ່ນມີຄຸນຄ່າທາງດ້ານອາ ຫານສູງ, ປູກເທື່ອດຽວແລ້ວສາມາດນຳໃຊ້ໄດ້ ຫລາຍປີ ແລະ ຫລັງຈາກລ້ຽງໃຫ້ສັດກິນແລ້ວມັນຈະປົ່ງໄວ, ສາ ມາດປູກດ້ວຍແກ່ນ, ເຫງົ້າ ແລະ ທ່ອນພັນ ຍົກເວັ້ນຖົ່ວສະໄຕໂລທີ່ສາມາດປູກດ້ວຍແກ່ນເທົ່ານັ້ນ.

ຫຍ້າກີນີ

ຖົ່ວສະໄຕໂລ

ຫຍ້າມຸລາໂຕ

ຫຍ້າເນເປຍ

4 ການກະກຽມແນວພັນ, ການປູກ ແລະ ການບົວລະບັດຮັກສາ

- ການປູກດ້ວຍແກ່ນແມ່ນປູກເປັນແຖວຫ່າງກັນປະມານ 30-50 ຊັງຕີແມັດ ເພື່ອຄວາມສະດວກໃນການກຳຈັດວັດສະພືດ, ຫວ່ານແກ່ນລົງດິນໃຫ້ສະໝ່ຳສະເໝີ ແລະ ປູກເລິກປະມານ 1-2 ຊັງຕີແມັດ.
- ໂດຍທົ່ວໄປແມ່ນໃຊ້ແກ່ນພັນປະມານ 10-15 ກິໂລກຼາມຕໍ່ເຮັກຕາ. ຫລັງຈາກປູກແລ້ວຕ້ອງໄດ້ເສຍຫຍ້າຂ້າຫຸ່ນ ໂດຍສະເພາະໃນໄລຍະ 3 ອາທິດທຳອິດຫລັງຈາກປູກແລ້ວ.
- ການປູກແມ່ນຄວນປູກໃນຕົ້ນລະດູຝົນໃນຊ່ວງເດືອນ ພຶດສະພາ, ມິຖຸນາ ຫລື ກໍລະກົດ ແຕ່ບໍ່ຄວນປູກຫລັງຈາກກາງເດືອນສິງຫາ.
- ສຳລັບການປູກດ້ວຍເຫງົ້າ ຫລື ທ່ອນພັນແມ່ນເປັນວິທີທີ່ງ່າຍ ແລະ ສາມາດນຳໃຊ້ໄດ້ໄວກວ່າການປູກດ້ວຍແກ່ນ. ດີທີ່ສຸດແມ່ນຕ້ອງປູກໃນມື້ດຽວກັນກັບມື້ຂຸດເຫງົ້າ ແຕ່ຖ້າປູກບໍ່ທັນແທ້ກໍ່ຄວນຮັກສາໄວ້ບ່ອນເຢັນ ຫລື ຊຸ່ມ ແລະ ປູກຫ່າງກັນປະມານ 50 x 50 ຊັງຕີແມັດ.

5 ການຄຸ້ມຄອງ ແລະ ນຳໃຊ້ທົ່ງຫຍ້າອາຫານສັດ

- ໂດຍທົ່ວໄປແລ້ວ ຫລັງຈາກປູກໄດ້ປະມານ 2 ເດືອນກໍ່ສາມາດກ່ຽວໃຫ້ສັດກິນໄດ້.
- ແຕ່ໃນມື້ການຄຸ້ມຄອງ ແລະ ນຳໃຊ້ແມ່ນປັດໃຈສຳຄັນທີ່ຈະຕ້ອງໄດ້ເອົາໃຈໃສ່ ເພາະຖ້າບໍ່ມີການຄຸ້ມຄອງທີ່ດີທົ່ງຫຍ້າຈະຖືກທຳລາຍ.
- ການຕັດ ຫລື ກ່ຽວຫຍ້າແມ່ນຄວນຕັດສູງຈາກໜ້າດິນປະມານ 5-10 ຊັງຕີແມັດ. ທັງນີ້ ມັນກໍ່ຂຶ້ນກັບປະເພດຫຍ້າ.
- ສ່ວນຖົ່ວສະໄຕໂລ ແມ່ນຄວນຕັດສູງຈາກລະດັບໜ້າດິນປະມານ 15-20 ຊັງຕີແມັດ.
- ຫລັງຈາກກ່ຽວໃຫ້ສັດກິນແຕ່ລະຄັ້ງແມ່ນຕ້ອງໃສ່ຝຸ່ນຄອກປະມານ 3 ໂຕນຕໍ່ເຮັກຕາ ຫລື ປຸຍສູດ 15-15-15 ໃນອັດຕາ 50 ກິໂລກຼາມຕໍ່ໄລ່ ແລະ ປຸຍ ສູດ 46-00-00 ໃນອັດຕາ 10-20 ກິໂລກຼາມຕໍ່ໄລ່.

ຖົ່ວສະໄຕໂລ

ຫຍ້າກີນີ

6 ປະລິມານ ການໃຫ້ອາຫານງົວໜຶ່ງໂຕໃນແຕ່ລະມື້

- ງົວທອມໜຶ່ງໂຕທີ່ມີນ້ຳໜັກປະມານ 200 ກິໂລກຼາມ ຈະກິນຫຍ້າສົດປະມານ 30 ກິໂລຕໍ່ມື້ ແລະ ກິນນ້ຳປະມານ 20 ລິດຕໍ່ມື້. ໃນນັ້ນ 30-40% ຂອງອາຫານແມ່ນຈະຖືກນຳໃຊ້ເພື່ອການຈະເລີນເຕີບໂຕ ແລະ ສ່ວນທີ່ເຫລືອແມ່ນເພື່ອການດຳລົງຊີວິດ. ນອກຈາກອາຫານທີ່ມີຄຸນນະ ພາບແລ້ວ ນ້ຳກໍ່ມີບົດບາດສຳຄັນທີ່ສຸດ, ຈຳເປັນ ແລະ ຂາດບໍ່ໄດ້ເພາະວ່າງົວເຮົາຂັງໄວ້ຕະຫລອດເວລາຂອງການທອມ; ສະນັ້ນຕ້ອງມີນ້ຳທີ່ສະອາດ ໄວ້ໃຫ້ງົວກິນຕະຫລອດເວລາ.
- ການສັງເກດວ່າສັດກິນອີ່ມ ຫລື ບໍ່ແມ່ນເຮົາຕ້ອງເບິ່ງວ່າໃນຮາງນັ້ນມີອາຫານເຫລືອບໍ່, ຖ້າຍັງມີອາຫານເຫລືອຢູ່ໃນຮາງກໍ່ສະແດງວ່າສັດໄດ້ກິນພຽງພໍ.
- ສຳລັບການທອມງົວແມ່ນເຮົາຄວນໃຫ້ຫຍ້າສົດ ປະມານ 15% ຂອງນ້ຳໜັກໂຕຕໍ່ມື້.
- ນອກຈາກການໃຫ້ອາຫານປະເພດຫຍ້າພັນປັບປຸງ, ຫຍ້າທຳມະຊາດທີ່ກ່າວມາຂ້າງເທິງນັ້ນການໃຫ້ອາຫານເຂັ້ມຂຸ້ນກໍ່ເປັນປັດໃຈສຳຄັນໃນການເພີ້ມນ້ຳໜັກຂອງງົວເພາະວ່າໃນອາຫານຂຸ້ນນັ້ນຈະມີຄຸນຄ່າທາງດ້ານອາ ຫານສູງກວ່າທີ່ຊາວກະສິກອນສາມາດຫາໄດ້ໃນທ້ອງຖິ່ນ.

ການລ້ຽງແບບປ່ອຍ

ການລ້ຽງແບບທອມ

ໂຄງການກະສິກຳ ເພື່ອໂພຊະນາການ

ບ້ານໂພນໄຊ ເມືອງໄຊເສດຖາ ນະຄອນຫຼວງວຽງຈັນ ສ ປປ ລາວ.
Phonexay village, Saysettha district, Vientiane Capital, Lao PDR.
ໂທ: +856 20 416 556
Fax: +856 20 416 556
E-mail : ssfsn.project@gmail.com
ເວັບໄຊ: www.afn.gov.la